ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

# ມາດຕະຖານ
# ການປະຕິບັດງານທີ່ດີສຳລັບຟາມໄກ່ພັນຊີ້ນ ຫຼື ໄກ່ພັນໄຂ່ ຂອງ ສປປ ລາວ

| | | |
|---|---|---|
| ລະຫັດມາດຕະຖານ | : | ມກປ-ລປ-2022-00013 |
| STDCODE | : | AFSTD-LF-2022-00013 |

ພຶດສະພາ, 2022

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

# ມາດຕະຖານ
# ການປະຕິບັດງານທີ່ດີສຳລັບຟາມໄກ່ພັນຊີ້ນ ຫຼື ໄກ່ພັນໄຂ່ ຂອງ ສປປ ລາວ

ລະຫັດມາດຕະຖານ : ມກປ-ລປ-2022-00013
STDCODE : AFSTD-LF-2022-00013

ອົງການສ້າງມາດຕະຖານ:
ກົມລ້ຽງສັດ ແລະ ການປະມົງ
ຖະໜົນ ສຸພານຸວົງ, ບ້ານສີຖານເໜືອ, ເມືອງສີໂຄດຕະບອງ
ນະຄອນຫຼວງວຽງຈັນ, ສປປ ລາວ, ຕປນ. 6644
ເບີໂທລະສັບ: +856 21 215242-3
ເບີໂທລະສານ: +856 21 215141
ເວບໄຊທ: http://dlf.maf.gov.la

ພຶດສະພາ, 2022

# ສາລະບານ


| | ໜ້າ |
|---|---|
| ຄຳນຳ | 0 |
| 1. ຈຸດປະສົງ | 1 |
| 2. ຂອບເຂດການນຳໃຊ້ | 1 |
| 3. ການອະທິບາຍຄຳສັບ | 1 |
| 4. ມາດຕະຖານຟາມລ້ຽງໄກ່ | 2 |
| 5 ການຄຸ້ມຄອງບໍລິຫານຟາມ | 4 |
| 6. ການຈັດການດ້ານສຸຂະພາບໄກ່ | 6 |
| 7. ການຂົນສົ່ງ ແລະ ສາງເກັບຮັກສາ | 7 |
| 8. ການບັນທຶກຂໍ້ມູນ ແລະ ການບັນທຶກຂໍ້ມູນ | 8 |
| 9. ການຄຸ້ມຄອງ ແລະ ຈັດການໄຂ່ | 9 |

# ຄໍານໍາ

ມາດຕະຖານເຕັກນິກຟາມລ້ຽງໄກ່ສະບັບນີ້ ແມ່ນ ເຄື່ອງມືໜຶ່ງທີ່ສ້າງຂຶ້ນ ເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການລ້ຽງສັດ ແລະ ສັດຕະວະແພດ, ນະໂຍບາຍແຫ່ງຊາດວ່າດ້ວຍຄວາມປອດໄພຂອງອາຫານ ໂດຍມີຈຸດປະສົງໃຫ້ເປັນຄູ່ມືປະຕິບັດໃຫ້ແກ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ໃນການຄວບຄຸມ ມາດຕະຖານການຜະລິດໄກ່ຢູ່ໃນ ສປປ ລາວ ໃຫ້ມີຄຸນນະພາບ, ປອດໄພ, ເປັນມິດກັບສິ່ງແວດລ້ອມ ປະກອບສ່ວນໃນການສົ່ງເສີມຍົກລະດັບ ສິນຄ້າສັດຂອງ ສປປ ລາວ ໃຫ້ສາມາດແຂ່ງຂັນດ້ານການຄ້າກັບພາກພື້ນ, ຂົງເຂດ ແລະ ສາກົນ ໃຫ້ສູງຂຶ້ນ.

ເອກະສານນີ້ ໄດ້ກວມເອົາ ບັນດາຂໍ້ກໍານົດທີ່ເປັນມາດຕະຖານ ສໍາລັບການປະຕິບັດງານຟາມລ້ຽງໄກ່ທີ່ດີ ເປັນຕົ້ນອົງປະກອບຂອງຟາມ, ສະຖານທີ່ຕັ້ງຟາມ, ພື້ນທີ່ ແລະ ການຈັດວາງຜັງຂອງຟາມ, ອາຄານຄອກສັດ ແລະ ໂຮງເຮືອນການຈັດການດ້ານອາຫານ ແລະ ນໍ້າ, ການຄຸ້ມຄອງ ບໍລິຫານຟາມ, ດ້ານສຸຂານາໄມໃນຟາມ, ການຈັດການຂອງເສັຍ ແລະສິ່ງແວດລ້ອມ, ການຈັດການດ້ານສຸຂະພາບສັດ, ການຈັດການດ້ານສະຫວັດດີການສັດ, ການຂົນສົ່ງ ແລະ ເກັບຮັກສາ ແລະ ການບັນທຶກຂໍ້ມູນ.

ກົມລ້ຽງສັດ ແລະ ການປະມົງ ຂໍແຈ້ງວ່າ ມາດຕະຖານເຕັກນິກສະບັບນີ້ ແມ່ນສ້າງຂຶ້ນບົນພື້ນຖານທີ່ໄດ້ຜ່ານການປຶກສາຫາລືຢ່າງກວ້າງຂວາງຈາກຜູ້ຊ່ຽວຊານ ແລະ ສອດຄ່ອງກັບມາດຕະຖານຂອງອາຊຽນ ແລະ ຄໍາແນະນໍາຂອງອົງການສຸຂະພາບສັດສາກົນແລ້ວ ແລະ ຫວັງວ່າຈະໃຫ້ກາຍເປັນມາດຕະຖານດຽວ ສໍາລັບການກວດກາ ແລະ ຢັ້ງຢືນຟາມລ້ຽງໄກ່ຢູ່ໃນ ສປປ ລາວ ຢ່າງເປັນເອກະພາບໃນຂອບເຂດທົ່ວປະເທດ.

ອອກທີ່: ນະຄອນຫຼວງວຽງຈັນ, ວັນທີ 06 MAY 2022
ອອກໂດຍ: ຫົວໜ້າກົມ

ກະຊວງກະສິກໍາ ແລະ ປ່າໄມ້
ກົມລ້ຽງສັດ ແລະ ການປະມົງ

ນ. ວິໄລພອນ ວໍລະພົມ

## 1. ຈຸດປະສົງ

ມາດຕະຖານສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະຖານ ກ່ຽວກັບຟາມລ້ຽງໄກ່ພັນຊີ້ນ ຫຼື ໄກ່ພັນໄຂ່ ເພື່ອຍົກລະດັບ ມາດຕະຖານການລ້ຽງໄກ່ພັນຊີ້ນ ຫຼື ໄກ່ພັນໄຂ່ ຂອງ ສປປ ລາວ ໃຫ້ສູງຂຶ້ນ ແນໃສ່ ຮັບປະກັນໃຫ້ໄດ້ຊີ້ນ ແລະ ໄຂ່ ໄກ່ສະອາດ, ປອດໄພ, ມີຄຸນນະພາບ ແລະ ເໝາະສົມສຳລັບການບໍລິໂພກ.

## 2. ຂອບເຂດການນຳໃຊ້

ມາດຕະຖານເຕັກນິກນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ປະກອບກິດຈະການ ແລະ ຄຸ້ມຄອງຟາມລ້ຽງໄກ່ພໍ່ແມ່ພັນ, ຟາມລ້ຽງໄກ່ລຸ້ນ, ຟາມລ້ຽງໄກ່ຊີ້ນ ແລະ ຟາມໄກ່ໄຂ່.

## 3. ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນມາດຕະຖານເຕັກນິກນີ້ມີຄວາມໝາຍດັ່ງນີ້:

1) ໄກ່ ໝາຍເຖິງ ສັດໃນວົງຕະກຸນ ***Phasianidae*** ທີ່ມີຊື່ວິທະຍາສາດວ່າ ***Gallus gallus*** ຊຶ່ງລ້ຽງເພື່ອຜະລິດຊີ້ນ, ໄຂ່ ເພື່ອບໍລິໂພກ;
2) **ລະບົບການຜະລິດເພື່ອເປັນສິນຄ້າ** ໝາຍເຖິງ ລະບົບການລ້ຽງໄກ່ ເປັນຈຳນວນຫຼາຍເພື່ອຈຳໜ່າຍເປັນສິນຄ້າ;
3) **ອົງການຄຸ້ມຄອງທີ່ມີສິດອຳນາດ** ໝາຍເຖິງ ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຄວາມຮູ້, ປະສົບການ ແລະ ອຳນາດທີ່ກຳນົດໄວ້ໃນ ກົດໝາຍ;
4) **ເຄື່ອງນຸ່ງປ້ອງກັນຕົວເອງ** ໝາຍເຖິງເຄື່ອງນຸ່ງທີ່ຜະລິດໂດຍໂຮງງານ ເພື່ອໃຫ້ຜູ້ສວມໃສ່ສາມາດປ້ອງກັນ ເຊື້ອພະຍາດ ຫຼື ຄວາມເປັນອັນຕະລາຍ;
5) **ເຈົ້າຂອງຟາມ** ແມ່ນນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດໃຫ້ດຳເນີນທຸລະກິດຟາມລ້ຽງໄກ່ ທີ່ມີລະບົບການຜະລິດເພື່ອເປັນສິນຄ້າ;
6) **ບຸກຄະລາກອນ** ໝາຍເຖິງ ພະນັກງານ ແລະ ກຳມະກອນ ທີ່ມາປະຕິບັດໜ້າທີ່ຢູ່ພາຍໃນຟາມ ໃນຮູບແບບ ເຕັມເວລາ, ບາງເວລາ ຫຼື ແບບອາສາສະໝັກ;
7) **ສະພາບສຸຂະພາບດີ** ໝາຍເຖິງ ການປັດສະຈາກ ຄວາມເຈັບປ່ວຍ, ໄດ້ຮັບບາດເຈັບ ຫຼື ອາການເຈັບປວດ.
8) **ພາຫານະ** ໝາຍເຖິງ ລົດ, ຍົນ, ເຮືອ ທີ່ໃຊ້ໃນການຂົນສົ່ງສັດ;
9) **ນ້ຳປະປາ** ໝາຍເຖິງ ນ້ຳທີ່ປາສະຈາກເຊື້ອພະຍາດ ແລະ ສານເຄມີທີ່ເປັນອັນຕະລາຍຕໍ່ສຸຂະພາບຄົນ ແລະ ສັດ;
10) **ຄວາມປອດໄພທາງດ້ານຊີວະພາບ** ໝາຍເຖິງ ຂັ້ນຕອນ ຫຼື ມາດຕະການ ທີ່ອອກແບບມາເພື່ອປ້ອງກັນ ກຸ່ມປະຊາກອນ ໃດໜຶ່ງ ຈາກສານຊີວະພາບ ຫຼື ສານຊີວະເຄມີ ທີ່ອັນຕະລາຍ;
11) **ໂຮງເຮືອນ** ໝາຍເຖິງ ສິ່ງປຸກສ້າງສຳລັບລ້ຽງໄກ່ ທີ່ມີຫຼັງຄາ ແລະ ໂຄງສ້າງແຂງແກ່ນ, ມີບ່ອນສຳລັບ ໃຫ້ນ້ຳ ແລະ ໃຫ້ອາຫານສັດ ໂດຍພາຍໃນອາດຈະແບ່ງກັ້ນເປັນຄອກ ເພື່ອນຳໃຊ້ ຕາມຈຸດປະສົງຂອງການຜະລິດ;
12) **ໂຮງເຮືອນປິດ** ໝາຍເຖິງ ອາຄານ ຫຼື ສິ່ງປຸກສ້າງທີ່ສາມາດ ຄວບຄຸມສະພາບແວດລ້ອມໄດ້;
13) **ໂຮງເຮືອນເປີດ** ໝາຍເຖິງ ອາຄານ ຫຼື ສິ່ງປຸກສ້າງທີ່ບໍ່ສາມາດ ຄວບຄຸມສະພາບແວດລ້ອມໄດ້.

## 4. ມາດຕະຖານຟາມລ້ຽງໄກ່

### 4.1 ອົງປະກອບຂອງຟາມ

#### 4.1.1 ສະຖານທີ່ຕັ້ງຟາມ

1) ຕັ້ງຢູ່ໃນເຂດທີ່ທາງການກຳນົດເປັນເຂດລ້ຽງສັດ ໂດຍຕ້ອງປະຕິບັດຕາມ ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ທັງຂັ້ນສູນກາງ ຫຼື ທ້ອງຖິ່ນ;
2) ມີໄຟຟ້າ, ນ້ຳສະອາດເຂົ້າເຖິງຢ່າງພຽງພໍ ແລະ ມີລະບົບເສັ້ນທາງຄົມມະນາຄົມສະດວກ;
3) ຫ່າງໄກຈາກອ່າງ ຫຼື ໜອງນ້ຳທຳມະຊາດ ຊຶ່ງມັກມີນົກປ່າມາລົງເລື້ອຍໆ;
4) ເຂດທີ່ບໍ່ມີໂອກາດ ນ້ຳຖ້ວມ;
5) ໄກຈາກໂຮງງານຂ້າສັດ ຫຼື ຕະຫລາດຄ້າຂາຍສັດ;
6) ບໍ່ມີສະພາບແວດລ້ອມທີ່ມີຄວາມສ່ຽງຕໍ່ການປົນເປື້ອນ ຈາກວັດຖຸ, ສານເຄມີ ແລະ ຊີວະພາບ ທີ່ເປັນອັນຕະລາຍ.

#### 4.1.2 ແຜນຜັງຂອງຟາມ

1) ມີການອອກແບບ ທີ່ດີ ໂດຍຈັດພື້ນທີ່ເປັນສັດສ່ວນ ຢ່າງຊັດເຈນ ເຊັ່ນ: ບ່ອນລ້ຽງໄກ່, ສາງເກັບອາຫານສັດ, ບ່ອນເກັບອຸປະກອນ, ບ່ອນກັກກັນສັດ, ບ່ອນແຍກສັດເຈັບປ່ວຍ ເພື່ອປິ່ນປົວ, ບ່ອນທຳລາຍຊາກສັດ, ບ່ອນຈຳໜ່າຍສັດ ລວມທັງບ່ອນປ່ຽນຖ່າຍເຄື່ອງນຸ່ງຂອງກຳມະກອນ, ຫ້ອງອາບນ້ຳ ແລະ ຫ້ອງສຸຂາ;
2) ມີການອອກແບບ ລະບົບລະບາຍອາກາດທີ່ດີ ແລະ ສາມາດທຳຄວາມສະອາດໄດ້ງ່າຍ;
3) ມີອາຄານ, ຮົ້ວ ອ້ອມຮອບຟາມ ຖາວອນ  ທີ່ສາມາດ ປ້ອງກັນບໍ່ໃຫ້ ສັດປ່າ, ສັດທີ່ເປັນພາຫະນຳເຊື້ອ ແລະ ສັດອື່ນເຂົ້າໄປໃນຟາມ;
4) ມີລະບົບໄຟຟ້າ ຢ່າງພຽງພໍ ແລະ ຮັບປະກັນຄວາມປອດໄພ;
5) ມີຄຳແນະນຳ ທີ່ສາມາດເບິ່ງເຫັນໄດ້ງ່າຍ ກ່ຽວກັບຂັ້ນຕອນ ການຈັດການ ແລະ ແກ້ໄຂ ໃນກໍລະນີເກີດເຫດການສຸກເສີນ.

#### 4.1.3 ໂຮງເຮືອນ

1) ໂຄງສ້າງໂຮງເຮືອນຕ້ອງ ໃຫ້ເໝາະສົມກັບ ຈຸດປະສົງ ຂອງການລ້ຽງໄກ່ ໂດຍມີຫຼັງຄາ, ມີການລະບາຍອາກາດທີ່ດີ ແລະ ສາມາດປົກປ້ອງໄກ່ ໄດ້ເປັນຢ່າງດີ;
2) ມີການຈັດວາງ ຄອກທີ່ເໝາະສົມກັບ ກິດຈະກຳ ຂອງການລ້ຽງສັດທີ່ດີ ທີ່ສາມາດອຳນວຍຄວາມສະດວກ ໃນການປະຕິບັດງານ ບໍ່ໃຫ້ປົນເປື້ອນ ລະຫວ່າງເຂດສະອາດ ແລະ ເຂດເປື້ອນ ຂອງຟາມ ແລະ ຮັບປະກັນ ການປະຕິບັດ  ມາດຕະການ ຄວາມປອດໄພທາງດ້ານຊີວະພາບ ເປັນຢ່າງດີ (ອີງໃສ່ ຄູ່ມືການຄຸ້ມຄອງ ຄວາມປອດໄພທາງດ້ານຊີວະພາບ ສຳລັບການລ້ຽງສັດປີກ ແບບເປັນຟາມ ເພື່ອຜະລິດເປັນສິນຄ້າ ຂອງເອຊຽນ).

### 4.2 ການຈັດການດ້ານອາຫານ

1) ອາຫານ ທີ່ໃຊ້ລ້ຽງສັດ ຕ້ອງຊື້ມາຈາກແຫຼ່ງຜະລິດ ອາຫານສັດ ທີ່ມີໃບຢັ້ງຢືນ ການຜະລິດທີ່ດີ  ຈາກອົງການ ທີ່ກ່ຽວຂ້ອງ  ຂອງຜູ້ຜະລິດ;

2) ກໍລະນີຟາມທີ່ ຜະລິດ ຫຼື ປະສົມອາຫານເອງ ຕ້ອງໄດ້ປະຕິບັດຕາມຂັ້ນຕອນ ການຜະລິດ ຫຼື ປະສົມອາຫານສັດທີ່ດີ ເພື່ອຫຼຸດຜ່ອນ ບໍ່ໃຫ້ເຊື້ອພະຍາດ ຫຼື ສານທີ່ບໍ່ເພິ່ງປາດຖະໜາ ປົນເປື້ອນໃສ່ອາຫານສັດ. ໃນກໍລະນີຈຳເປັນອາດມີຄວາມຕ້ອງການຜູ້ຊ່ຽວຊານດ້ານການຜະລິດອາຫານມາປະຈຳ;

3) ຕ້ອງມີການຄຸ້ມຄອງ ຕິດຕາມ ຕ່ອງໂສ້ອາຫານສັດ (ການຜະລິດ, ການຂົນສົ່ງ, ການເກັບຮັກສາ ແລະ ການນຳໃຊ້ອາຫານສັດ) ເພື່ອປ້ອງກັນບໍ່ໃຫ້ມີການປົນເປື້ອນ ຈາກສິ່ງທີ່ເປັນອັນຕະລາຍ ທາງເຄມີ, ຊີວະພາບ ແລະ ວັດຖຸ ຫຼື ປ້ອງກັນ ການເສື່ອມຄຸນນະພາບຂອງອາຫານສັດ ໃຫ້ມີໜ້ອຍທີ່ສຸດ;

4) ຄວນນຳໃຊ້ອາຫານສັດຕາມການແນະນຳຂອງຜູ້ຜະລິດ ແລະ ເກັບຮັກສາໄວ້ໃນສະຖານທີ່ ທີ່ມີການລະບາຍອາກາດທີ່ດີ.

### 4.3 ການຄຸ້ມຄອງ ຜະລິດຕະພັນຢາສັດຕະວະແພດ ແລະ ສານເຄມີຕ້ອງຫ້າມ

1) ຟາມຕ້ອງມີ ບັນຊີຜະລິດຕະພັນຢາສັດຕະວະແພດ ຢາທີ່ໄດ້ຂຶ້ນທະບຽນ, ຢາທີ່ອະນຸຍາດໃຫ້ນຳໃຊ້ ແລະ ຢາຕ້ອງຫ້າມ ຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ກຳນົດ;

2) ຟາມຕ້ອງມີ ບັນຊີສານເຄມີຄວບຄຸມ ແລະ ສານເຄມີຕ້ອງຫ້າມ ຂອງອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ກຳນົດ;

3) ອາຫານສັດ ຕ້ອງບໍ່ມີ ສ່ວນປະສົມ, ສານເຄມີ ແລະ ຢາສັດຕະວະແພດ ທີ່ຕ້ອງຫ້າມ.

### 4.4 ຄຸນນະພາບນ້ຳ ແລະ ການບຳບັດນ້ຳ

1) ນ້ຳທີ່ໃຊ້ພາຍໃນຟາມຕ້ອງເປັນນ້ຳປະປາ ຫຼື ທຽບເທົ່ານ້ຳປະປາ;

2) ແຫຼ່ງນ້ຳທີ່ໃຊ້ ຕ້ອງແມ່ນນ້ຳ ທີ່ຮູ້ຈັກດີກ່ຽວກັບສະພາບທາງດ້ານຊີວະພາບ ແລະ ແຮ່ທາດ ໃນລະດັບທີ່ຍອມຮັບໄດ້ (ນ້ຳທີ່ເໝາະສົມ ສຳລັບສັດກິນ);

3) ນ້ຳໃຊ້ປະເພດອື່ນທີ່ບໍ່ແມ່ນນ້ຳປະປາ ຕ້ອງໄດ້ບຳບັດໃຫ້ໄດ້ ຕາມມາດຕະຖານ ທີ່ຂະແໜງການທີ່ກ່ຽວຂ້ອງກຳນົດ;

4) ມີການກວດກາ ລະບົບການຂ້າເຊື້ອໃນນ້ຳ ຢ່າງສະໝ່ຳສະເໝີ ແລະ ຢ່າງໜ້ອຍໜຶ່ງຄັ້ງ ຕໍ່ໄກ່ໜຶ່ງຊຸດ;

5) ມີການກວດກາ ລະບົບບຳບັດນ້ຳເປື້ອນ ທຸກວັນ ແລະ ຕ້ອງໄດ້ບັນທຶກຂໍ້ມູນ ຕົວຊີ້ວັດທີ່ເໝາະສົມ ແລະ ເກັບຮັກສາໄວ້ ສຳລັບການລ້ຽງໄກ່ແຕ່ລະຊຸດ;

6) ນ້ຳທີ່ໄດ້ຜ່ານ ການບຳບັດແລ້ວ ອາດສາມາດນຳໃຊ້ເປັນ ນ້ຳໃຫ້ສັດກິນ ຫຼື ໃຊ້ສຳລັບລະບົບໃຫ້ຄວາມເຢັນຂອງໂຮງເຮືອນ ຫຼື ນຳໃຊ້ ສຳລັບລ້າງໂຮງເຮືອນ;

7) ນ້ຳ ຕ້ອງຖືກກວດກາ ລະດັບຂອງເຊື້ອພະຍາດ (ອີໂກລາຍ *(E.coli)*) ແລະ ໂກລີຟອມຢູ່ໃນອາຈົມ *(faecal coliforms)* ຢ່າງສະໝ່ຳສະເໝີ ເພື່ອເປັນຕົວຊີ້ວັດ ປະສິດທິພາບຂອງ ການອະນາໄມຂ້າເຊື້ອ;

8) ການຈັດການ ແລະ ກວດຄຸນນະພາບນ້ຳ ອາດຈະນຳໃຊ້ ມາດຕະການ ທີ່ກຳນົດ ຢູ່ໃນຄູ່ມືການຈັດການ ຄວາມປອດໄພທາງດ້ານຊີວະພາບ ສຳລັບການລ້ຽງສັດປີກເປັນສິນຄ້າ ຂອງອາຊຽນ.

## 5 ການຄຸ້ມຄອງ ບໍລິຫານຟາມ

### 5.1 ປື້ມຄູ່ມືການຄຸ້ມຄອງບໍລິຫານຈັດການຟາມ

1) ຟາມຕ້ອງມີ ປື້ມຄູ່ມືບໍລິຫານຟາມທີ່ສະແດງເຖິງ ນະໂຍບາຍ, ແຜນ ແລະ ເປົ້າໝາຍ ການຜະລິດ ລວມທັງຂັ້ນຕອນການປະຕິບັດ ໃນກໍລະນີເກີດເຫດສຸກເສີນ;
2) ຟາມ ຕ້ອງມີເອກະສານ ກ່ຽວກັບລະບົບການຈັດການຟາມ ທີ່ຈະສາມາດກວດກາໄດ້;
3) ຟາມຕ້ອງມີ ຮູບພາບໂຄງຮ່າງການຈັດຕັ້ງຂອງຟາມ ເພື່ອສະແດງໃຫ້ທຸກຄົນສາມາດເຫັນໄດ້ ຢ່າງຊັດເຈນ.

### 5.2 ບຸກຄະລາກອນ

1) ຟາມ ຕ້ອງມີບຸກຄະລາກອນ ທີ່ມີສຸຂະພາບສົມບູນແຂງແຮງ ແລະ ໄດ້ຮັບການກວດສຸຂະພາບເປັນປະຈຳປີ;
2) ຟາມ ຕ້ອງສ້າງສະພາບແວດລ້ອມທີ່ສະອາດ ແລະ ປອດໄພ ໃຫ້ແກ່ຜູ້ປະຕິບັດງານ. ມີ ການແນະນຳ ຂັ້ນຕອນການປະຕິບັດ ໃນກໍລະນີສຸກເສີນ ຫຼື ເວລາເກີດ ອຸບັດເຫດ, ພ້ອມທັງມີຄຳແນະນຳ ໃນການນຳໃຊ້ຊຸດປະຖົມ ພະຍາບານ ແລະ ອຸປະກອນດັບເພີງ ແລະ ກວດກາອຸປະກອນ ໃຫ້ຢູ່ໃນສະພາບພ້ອມທີ່ຈະໃຊ້ງານ ແລະ ເຂົ້າເຖິງໄດ້ງ່າຍ;
3) ຟາມຕ້ອງມີ ລະບົບລາຍງານ ໃຫ້ແກ່ໜ່ວຍງານທີ່ກ່ຽວຂ້ອງຊາບ ໃນກໍລະນີ ເກີດອຸບັດເຫດ ທີ່ອາດສົ່ງຜົນກະທົບຮ້າຍແຮງ ຕໍ່ສຸຂະພາບ ຂອງບຸກຄະລາກອນພາຍໃນຟາມ;
4) ເຈົ້າຂອງຟາມຕ້ອງ ເປັນເຈົ້າການ ປະຕິບັດລະບຽບການ ແລະ ຂໍ້ສະເໜີແນະ ຂອງອົງການແຮງງານລະຫວ່າງປະເທດ ວ່າດ້ວຍການນຳໃຊ້ແຮງງານເດັກ;
5) ເຈົ້າຂອງຟາມຕ້ອງ ສົ່ງເສີມຄວາມສະເໝີພາບລະຫວ່າງບຸກຄະລາກອນຍິງຊາຍ.

### 5.3 ຄວາມສາມາດ

1) ບຸກຄະລາກອນ ຂອງຟາມ ຕ້ອງໄດ້ຮັບການຝຶກອົບຮົມດ້ານວິຊາການ ກ່ຽວກັບໜ້າທີ່ ທີ່ຕົນເອງໄດ້ຮັບ ການມອບໝາຍ. ນອກຈາກນັ້ນ ຄວນໄດ້ການຝຶກອົບຮົມ ເພີ່ມເຕີມ ກ່ຽວກັບຫົວຂໍ້ດັ່ງຕໍ່ໄປນີ້: ການອະນາໄມຂ້າເຊື້ອຟາມ, ສຸຂານາໄມສ່ວນບຸກຄົນ, ການຈັບບັງຄັບສັດ ແລະ ສະຫວັດດີການສັດ, ການປະສົມພັນສັດ, ການນຳໃຊ້ຢາສັດຕະວະແພດ ແລະ ການກັກກັນສັດ;
2) ບຸກຄະລາກອນ ຂອງຟາມ ຕ້ອງມີຄວາມສາມາດ ໃນການປະຕິບັດໜ້າທີ່ ທີ່ຕົນເອງຮັບຜິດຊອບ ແລະ ຕ້ອງມີການຕີລາຄາ ປະເມີນຄວາມອາດສາມາດຂອງເຂົາເຈົ້າ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ;
3) ຟາມມີບຸກຄະລາກອນພຽງພໍ ຕາມຄວາມຕ້ອງການ ຂອງແຕ່ລະໜ້າວຽກ ພາຍໃນຟາມ ລວມທັງ ທີ່ປຶກສາ ແລະ ສັດຕະວະແພດ.

### 5.4. ສຸຂານາໄມຂອງຟາມ

#### 5.4.1 ສຸຂານາໄມສ່ວນບຸກຄົນ

1) ຜູ້ລ້ຽງສັດທຸກຄົນ ຕ້ອງນຸ່ງເຄື່ອງປ້ອງກັນຕົນເອງ ແລະ ໃສ່ເກີບ ທີ່ເໝາະສົມ, ສາມາດຂ້າເຊື້ອໄດ້ ແລະ ຄວນໃສ່ຜ້າອັດປາກ ຢູ່ຕະຫຼອດເວລາ;
2) ຕ້ອງມີການ ຄວບຄຸມການເຂົ້າອອກ ຂອງຜູ້ລ້ຽງສັດ ເພື່ອຫຼີກລ່ຽງ ການປົນເປື້ອນ ລະຫວ່າງກຸ່ມສັດທີ່ ແຕກຕ່າງກັນ, ລະຫວ່າງເຂດສະອາດ ແລະ ເຂດເປື້ອນ ໂດຍຜູ້ລ້ຽງສັດຕ້ອງ ເຂົ້າໄປເຮັດວຽກໃນເຂດສະອາດກ່ອນ ແລ້ວ

ຈຶ່ງເຂົ້າໄປ ໃນເຂດເປື້ອນ ແລະ ຫ້າມບໍ່ໃຫ້ເຂົ້າໄປເຂດເປື້ອນກ່ອນ ເຂົ້າໄປເຮັດວຽກໃນເຂດສະອາດໂດຍເດັດຂາດ;

3) ຜູ້ລ້ຽງສັດ ຕ້ອງບໍ່ນຳເອົາອຸປະກອນ ຫຼື ເຄື່ອງໃຊ້ສ່ວນຕົວ ທີ່ອາດກໍ່ໃຫ້ເກີດການປົນເປື້ອນ ຫຼື ເກີດອັນຕະລາຍ ເຂົ້າໄປໃນ ເຂດທີ່ມີສັດລ້ຽງ;
4) ສຳລັບຜູ້ລ້ຽງສັດ ທີ່ໄປ ເຮັດວຽກຢູ່ນອກຟາມ ຫຼື ຢ້ຽມຢາມຟາມອື່ນ ກ່ອນກັບເຂົ້າມາເຮັດວຽກໃນຟາມ ຕ້ອງກັກໂຕ ແລະ ຕິດຕາມອາການ ໃນຊ່ວງໄລຍະ ເວລາໃດໜຶ່ງ ແລ້ວຈຶ່ງ ເຂົ້າມາ ໃນເຂດທີ່ມີສັດລ້ຽງໄດ້.

### 5.4.2 ດ້ານສຸຂານາໄມທົ່ວໄປໃນຟາມ

1) ສານເຄມີ ທີ່ນຳໃຊ້ສຳລັບການອະນາໄມ ແລະ ຂ້າເຊື້ອ ພາຍໃນຟາມ ຕ້ອງໄດ້ແມ່ນ ສານເຄມີທີ່ອະນຸຍາດ ໂດຍອີງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ (ອີງໃສ່ ບັນຊີສານເຄມີ ທີ່ອະນຸຍາດນຳໃຊ້ ຂອງອົງການກົດລະຫັດອາຫານສາກົນ (Codex Alimentarius));
2) ຟາມຕ້ອງມີ ອຸປະກອນ ແລະ ເຄື່ອງມືທີ່ເໝາະສົມ ສຳລັບການຈັດຕັ້ງປະຕິບັດ ວຽກງານອະນາໄມຂ້າເຊື້ອ ພາຍໃນຟາມ ຢ່າງມີປະສິດທິພາບ;
3) ຟາມຄວນມີ ຂັ້ນຕອນໃນການຈັດຕັ້ງປະຕິບັດ ການອະນາໄມ ຂ້າເຊື້ອ ຢ່າງຊັດເຈນ.

### 5.4.3 ການຄຸ້ມຄອງ ສິ່ງເສດເຫຼືອ

1) ສິ່ງເສດເຫຼືອທີ່ເປັນທາດແຫຼວ (ລວມທັງ ສິ່ງເສດເຫຼືອທາງດ້ານຊີວະພາບ) ແລະ ເປັນທາດແຂງ ຕ້ອງໄດ້ຈັດການ ແລະ ທຳລາຍ ຕາມລະບຽບການ ທີ່ຂະແໜງການກ່ຽວຂ້ອງກຳນົດ;
2) ຜູ້ບໍລິຫານຟາມ ຕ້ອງມີຄຳແນະນຳທີ່ຈະແຈ້ງ ກ່ຽວກັບຂັ້ນຕອນການປະຕິບັດ ສຳລັບການທຳລາຍ ສິ່ງເສດເຫຼືອຂອງຟາມທີ່ເປັນທາດກ້ອນ ແລະ ເປັນສານເຄມີ (ຕົວຢ່າງ: ຢາຂ້າແມງໄມ້/ຫຍ້າ ທີ່ໝົດອາຍຸການນຳໃຊ້, ພາຊະນະບັນຈຸ, ສີ ແລະ ອື່ນໆ);
3) ໄກ່ທີ່ຕາຍແລ້ວ ຕ້ອງທຳລາຍ ດ້ວຍວິທີການ ຝັງ ຫຼື ເຜົາ ຫຼື ວິທີການອື່ນ ຕາມລະບຽບການ ທີ່ຂະແໜງການກ່ຽວຂ້ອງ ກຳນົດ;
4) ຖ້າຟາມມີບ່ອນສຳລັບ ເຮັດປຸຍໝັກ, ບ່ອນດັ່ງກ່າວຕ້ອງຕັ້ງຢູ່ ຫ່າງໄກຈາກ ເຂດດຳເນີນການຜະລິດຂອງຟາມ ແລະ ເສັ້ນທາງນ້ຳ ພ້ອມທັງ ປ້ອງກັນ ການຮົ່ວຊຶມ ໃນເວລາຝົນຕົກ;
5) ອ່າງ ແລະ ຖັງບຳບັດນ້ຳເປື້ອນ ຄວນມີການບຳລຸງຮັກສາ ຢ່າງເປັນປົກກະຕິ ເພື່ອຫຼີກລ່ຽງ ບໍ່ໃຫ້ນ້ຳລົ້ນອອກມາ;
6) ອ່າງ ແລະ ຖັງບຳບັດນ້ຳເປື້ອນ ຕ້ອງຕັ້ງຢູ່ຫ່າງຈາກ ເຂດທີ່ ທີ່ມີກິດຈະກຳຂອງຟາມ;
7) ລະບົບການບຳບັດນ້ຳເປື້ອນ ຕ້ອງຢູ່ໃນສະພາບດີ ແລະ ສາມາດບຳບັດນ້ຳເປື້ອນ ໄດ້ຢ່າງເປັນປົກກະຕິ ແລະ ຖືກຕ້ອງ;
8) ໃນກໍລະນີທີ່ຕ້ອງປ່ອຍນ້ຳເປື້ອນຂອງຟາມ ອອກສູ່ແຫຼ່ງນ້ຳທຳມະຊາດ ຫຼື ສາທາລະນະ ຕ້ອງມີການບຳບັດນ້ຳ ໃຫ້ໄດ້ຕາມມາດຕະຖານ ທີ່ຂະແໜງການກ່ຽວຂ້ອງກຳນົດ ເສຍກ່ອນ.

5.4.4 ການຄວບຄຸມ ສັດທີ່ເປັນພາຫະນຳເຊື້ອພະຍາດ

1) ຟາມຕ້ອງ ຮັກສາໃຫ້ຢູ່ໃນສະພາບທີ່ດີ ທີ່ສາມາດປ້ອງກັນບໍ່ໃຫ້ ແມງໄມ້ ແລະ ສັດທີ່ເປັນພາຫະນຳເຊື້ອ ເຂົ້າໄປໃນຟາມໄດ້;
2) ຟາມຄວນ ມີແຜນຄວບຄຸມ ຫຼື ກຳຈັດ ແມງໄມ້ ແລະ ສັດທີ່ເປັນພາຫະນຳເຊື້ອ ເພື່ອບໍ່ໃຫ້ ເຂົ້າມາລົບກວນສັດໃນຟາມ;
3) ການນຳໃຊ້ຢາຂ້າແມງໄມ້ ຫຼື ຢາເບື່ອໜູ ຕ້ອງ ນຳໃຊ້ສານທີ່ທາງການຮັບຮອງ ແລະ ຕ້ອງນຳໃຊ້ໃຫ້ຖືກຕ້ອງຕາມການແນະນຳຂອງຜູ້ຜະລິດ.

6. ການຈັດການດ້ານສຸຂະພາບໄກ່

6.1 ການນຳໄກ່ຊຸດໃໝ່ເຂົ້າລ້ຽງໃນຟາມ

1) ໄກ່ທີ່ຈະນຳເຂົ້າມາລ້ຽງທົດແທນ ຈະຕ້ອງມາຈາກຟາມທີ່ໄດ້ມາດຕະຖານ, ໄກ່ ຕ້ອງມີສຸຂະພາບດີ ໂດຍໄດ້ຜ່ານການຢັ້ງຢືນ ຈາກສັດຕະວະແພດ ຂອງຟາມຕົ້ນທາງ ຫຼື ສັດຕະວະແພດຂອງລັດ;
2) ໄກ່ທີ່ນຳເຂົ້າມາໃໝ່ ຕ້ອງມີການແຍກກັກກັນ ຢູ່ຄອກກັກກັນ ທີ່ແຍກຈາກຄອກຜະລິດ ໃນໄລຍະໃດໜຶ່ງ ເພື່ອຕິດຕາມສຸຂະພາບ ແລະ ປ້ອງກັນ ຄວາມສ່ຽງ ທີ່ອາດຈະເກີດການແຜ່ກະຈາຍ ຂອງເຊື້ອພະຍາດ;
3) ໄກ່ທຸກຊຸດທີ່ນຳເຂົ້າມາໃໝ່ ຫຼື ເກີດໃໝ່ ຕ້ອງມີການເຮັດ ນ້ຳເບີ້ປະຈຳຊຸດ ເພື່ອໃຫ້ສາມາດສືບຄົ້ນຍ້ອນຫຼັງໄດ້.

6.2 ການເຝົ້າລະວັງ, ກັນ ແລະ ຄວບຄຸມພະຍາດ

1) ຕ້ອງມີແຜນສັກຢາກັນພະຍາດສັດ ຕາມທີ່ອີງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດກຳນົດ. ຢາກັນພະຍາດ ຕ້ອງແມ່ນຢາ ທີ່ໄດ້ຮັບການ ຮັບຮອງໂດຍອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ;
2) ໃນກໍລະນີ ມີຄວາມຈຳເປັນຕ້ອງໄດ້ຂ້າແມ່ກາຝາກ ໃຫ້ສັດພາຍໃນຟາມ ຕ້ອງມີແຜນຂ້າແມ່ກາຝາກ ເປັນລາຍລັກອັກສອນ;
3) ຕ້ອງມີການກວດກາ ຕິດຕາມ, ບັນທຶກ ສະພາບດ້ານສຸຂະພາບສັດ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງ;
4) ໃນກໍລະນີ ພົບສັດ ເປັນພະຍາດ ຕ້ອງໄດ້ແຍກປິ່ນປົວສັດທີ່ຕິດພະຍາດ ອອກຈາກຝູງ, ຖ້າມີຄວາມຈຳເປັນ, ຕ້ອງໄດ້ຂ້າສັດ ທີ່ຕິດເຊື້ອພະຍາດດັ່ງກ່າວ ຕ້ອງຂ້າ ດ້ວຍວິທີການ ທີ່ບໍ່ທໍລະມານ;
5) ຟາມຕ້ອງມີ ຄອກ ຫຼື ສະຖານທີ່ ແຍກປິ່ນປົວສະເພາະ ສຳລັບກັກກັນ ໄກ່ທີ່ສົງໄສ ຫຼື ຕິດເຊື້ອພະຍາດ;
6) ການນຳໃຊ້ ຢາຕ້ານເຊື້ອ ຫຼື ອາຫານສັດປະສົມຢາ ເພື່ອຄວບຄຸມພະຍາດ ຕ້ອງປະຕິບັດຕາມ ຄຳແນະນຳ ຂອງສັດຕະວະແພດປະຈຳຟາມ;
7) ໄກ່ທີ່ຖືກປິ່ນປົວຫາຍດີແລ້ວ ກ່ອນນຳໄປບໍລິໂພກ ຕ້ອງຮັບປະກັນວ່າ ໄກ່ ແລະ ຜະລິດຕະພັນໄກ່ ດັ່ງກ່າວ ປອດໄພ ແລະ ພົ້ນໄລຍະເວລາຢຸດໃຫ້ຢາກ່ອນການບໍລິໂພກ ຕາມການແນະນຳ ຂອງສັດຕະວະແພດປະຈຳຟາມ.

### 6.3 ການຮ່ວມມືກັບຫ້ອງວິໄຈພະຍາດສັດ

1) ຟາມ ຕ້ອງມີການປະສານງານ ແລະ ໃຫ້ຄວາມຮ່ວມມືກັບຫ້ອງວິໄຈພະຍາດສັດ ທີ່ອົງການຄຸ້ມຄອງ ວຽກງານລ້ຽງສັດ ແລະ ສັດຕະວະແພດຮັບຮອງ ເພື່ອດຳເນີນ ການເຝົ້າລະວັງ ແລະ ຕິດຕາມພະຍາດ ທີ່ຈຳເປັນຕ້ອງແຈ້ງ ຢ່າງເປັນປົກກະຕິ;
2) ໃນກໍລະນີ ທີ່ມີການເກີດການລະບາດ ແລະ ຄວບຄຸມພະຍາດສັດທີ່ຈຳເປັນຕ້ອງແຈ້ງ ຟາມຕ້ອງໃຫ້ຄວາມຮ່ວມມື ກັບຫ້ອງວິໄຈພະຍາດສັດ ທີ່ອົງການຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດຮັບຮອງ ໃນການເກັບຕົວຢ່າງ ສົ່ງໄປ ວິໄຈ ເພື່ອບົ່ງມະຕິພະຍາດ ຢ່າງຕໍ່ເນື່ອງ ຈົນກວ່າ ການລະບາດຂອງພະຍາດ ສາມາດຄວບຄຸມໄດ້.

### 6.4 ຂັ້ນຕອນປະຕິບັດໃນກໍລະນີມີການສົງໄສເກີດການລະບາດພະຍາດ

1) ໃນກໍລະນີ ເກີດ ຫຼື ສົງໄສ ເກີດການລະບາດ ຂອງພະຍາດຮ້າຍແຮງ ຢູ່ພາຍໃນຟາມ ຜູ້ບໍລິຫານ ຫຼື ສັດຕະວະແພດ ປະຈຳຟາມ ຈະຕ້ອງໄດ້ ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ກ່ຽວກັບການກັນ ແລະ ຄວບຄຸມພະຍາດ ຂອງອົງການ ຄຸ້ມຄອງວຽກງານລ້ຽງສັດ ແລະ ສັດຕະວະແພດ ແລະ ຄຳແນະນຳ ຂອງອົງການສຸຂະພາບສັດສາກົນ;
2) ປະຕິບັດ ຕາມມາດຕະການສຸກເສີນ ກ່ຽວກັບຄວາມປອດໄພ ທາງດ້ານຊີວະພາບ ຕາມຄູ່ມືການຈັດການຄວາມ ປອດໄພທາງຊີວະພາບ ສຳລັບຟາມລ້ຽງສັດປີກ ເປັນສິນຄ້າ ຂອງອາຊຽນ (ASEAN Biosecurity Management Manual for Commercial Poultry Farming and biosecurity protocols for poultry).

### 6.5 ການປິ່ນປົວ

1) ການນຳໃຊ້ຢາສັດຕະວະແພດ ຕ້ອງຢູ່ພາຍໃຕ້ການຄຸ້ມຄອງ ຂອງສັດຕະວະແພດຂອງຟາມ ຫຼື ຂອງລັດ;
2) ຟາມຕ້ອງໄດ້ມີ ການບັນທຶກ ແລະ ເກັບຮັກສາຂໍ້ມູນ ກ່ຽວກັບການຈັດຊື້ ແລະ ການນຳໃຊ້ ຢູ່ພາຍໃນຟາມ ຢ່າງ ເປັນປົກກະຕິ ແລະ ສາມາດກວດກາໄດ້.

### 6.6 ສະຫວັດດີການສັດ

1) ການລ້ຽງໄກ່ ຕ້ອງໄດ້ເອົາໃຈໃສ່ ໃນການລ້ຽງດູ ໃຫ້ຖືກຕ້ອງຕາມຫຼັກການດ້ານສະຫວັດດີການສັດ. ໃນກໍລະນີ ໄກ່ໄດ້ຮັບບາດເຈັບ ຫຼື ຜິດປົກກະຕິ ໄກ່ຕ້ອງໄດ້ຮັບການປິ່ນປົວຢ່າງເໝາະສົມ ເພື່ອບໍ່ໃຫ້ໄກ່ ໄດ້ຮັບຄວາມທຸກ ທໍລະມານ;
2) ໄກ່ທຸກໂຕ ຕ້ອງໄດ້ຮັບ ອາຫານ, ນ້ຳ ແລະ ມີພື້ນທີ່ ທີ່ພຽງພໍ ແລະ ເໝາະສົມ ໂດຍໃຫ້ ອີງໃສ່ຄຳແນະນຳ ກ່ຽວ ກັບ ສະຫວັດດີການສັດ ຂອງອົງການສຸຂະພາບສັດສາກົນ (OIE guidelines on Animal Welfare))

## 7. ການຂົນສົ່ງ ແລະ ສາງເກັບຮັກສາ

### 7.1 ການຂົນສົ່ງ

1) ການຂົນສົ່ງໄກ່ ຈາກຟາມໄປເຖິງຈຸດໝາຍປາຍທາງ ຕ້ອງເຮັດໃຫ້ໄກ່ໄດ້ຮັບຄວາມກົດດັນໜ້ອຍທີ່ສຸດ ແລະ ຕ້ອງ ດູແລ ບໍ່ເຮັດໃຫ້ໄກ່ ໄດ້ຮັບບາດເຈັບ ຫຼື ຕິດກັບພະຍາດ;
2) ພາຫານະຂົນສົ່ງໄກ່ ຕ້ອງລ້າງ ອະນາໄມ ແລະ ຂ້າເຊື້ອ ໃຫ້ສະອາດ ທັງກ່ອນ ແລະ ຫຼັງການຂົນສົ່ງ;

3) ພາຫານະທີ່ ຂົນສົ່ງໄກ່ ຕ້ອງຂົນສົ່ງ ສະເພາະໄກ່ເທົ່ານັ້ນ ບໍ່ໃຫ້ນຳໃຊ້ຈຸດປະສົງອື່ນ;
4) ຕ້ອງຂົນສົ່ງໄກ່ ໃນຊ່ວງທີ່ມີອາກາດເຢັນ ເພື່ອຫຼີກເວັ້ນ ອາກາດຮ້ອນ ທີ່ອາດຈະເຮັດໃຫ້ໄກ່ ເກີດຄວາມກົດດັນ ແລະ ອິດເມື່ອຍ ຈາກອາກາດທີ່ອົບເອົ້າ;
5) ການຂົນສົ່ງໄກ່ນ້ອຍເກີດໃໝ່ ຕ້ອງໄດ້ບັນຈຸໃສ່ກ່ອງທີ່ເໝາະສົມ ຫຼື ຖ້າໃສ່ພາຊະນະບັນຈຸ ຕ້ອງຜູກມັດ ໃຫ້ແໜ້ນໜາ ໂດຍຖືກຕ້ອງຕາມລະບຽບການ ຂອງຂະແໜງການກ່ຽວຂ້ອງກຳນົດ;
6) ການຂົນສົ່ງໄກ່ ຕ່າງອາຍຸ ຫຼື ຕ່າງຂະໜາດ ຄວນມີແຍກໄກ່ ຕາມສາຍພັນ, ຂະໜາດ, ເພດ ແລະ ອາຍຸ ຫຼື ຕາມຄວາມຕ້ອງການຂອງລູກຄ້າ;
7) ກ່ອນການຂົນສົ່ງແຕ່ລະຄັ້ງ ຕ້ອງມີໃບອະນຸຍາດ ການເຄື່ອນຍ້າຍ ຕາມການກຳນົດ ຂອງລະບຽບການທີ່ກ່ຽວຂ້ອງ ພ້ອມທັງ ມີໃບຢັ້ງຢືນສຸຂະພາບສັດ ທີ່ອອກໂດຍສັດຕະວະແພດຂອງຟາມ.

### 7.2 ສາງເກັບຮັກສາ

1) ຟາມ ຕ້ອງມີສິ່ງອຳນວຍຄວາມສະດວກ ເໝາະສົມ ສຳລັບ ເກັບຮັກສາ ວັດຖຸປະກອນ;
2) ສາງເກັບຮັກສາ ວັດຖຸປະກອນ ຕ້ອງຮັກສາໃຫ້ມີຄວາມສະອາດຢູ່ສະເໝີ;
3) ສາງ ຕ້ອງມີການລະບາຍອາກາດ ແລະ ປ້ອງກັນຄວາມຊຸ່ມ ໄດ້ຢ່າງພຽງພໍ ແລະ ສາມາດປ້ອງກັນ ແມງໄມ້;
4) ຖ້າເປັນໄປໄດ້ ຄວນນຳໃຊ້ລະບົບ ເຂົ້າກ່ອນ ອອກກ່ອນ.

## 8. ການບັນທຶກຂໍ້ມູນ ແລະ ການບັນທຶກຂໍ້ມູນ

ເພື່ອປ້ອງກັນ ບັນຫາຕ່າງໆ ທີ່ອາດຈະເກີດຂຶ້ນ ຢູ່ພາຍໃນຟາມ ເປັນຕົ້ນ ບັນຫາດ້ານ ພະຍາດ, ການເກີດຂຶ້ນຂອງສິ່ງອັນຕະລາຍ ຈາກສານເຄມີ ຫຼື ບັນຫາຄວາມປອດໄພ ທາງດ້ານກາຍະພາບ ຟາມຕ້ອງມີການບັນທຶກຂໍ້ມູນ ເພື່ອເປັນບ່ອນອີງ ໃຫ້ແກ່ ການແກ້ໄຂບັນຫາ ໄດ້ຢ່າງຖືກຕ້ອງ ແລະ ວ່ອງໄວ ໂດຍຂໍ້ມູນດັ່ງກ່າວ ຄວນປະກອບດ້ວຍຫົວຂໍ້ ດັ່ງລຸ່ມນີ້:

1) ການຈັດຕັ້ງການຜະລິດ;
2) ແນວພັນ;
3) ອາຫານສັດ;
4) ການຈັດຊື້;
5) ການຂົນສົ່ງ;
6) ການເກັບຮັກສາຢູ່ສາງ;
7) ສຸຂະພາບສັດ (ການປິ່ນປົວ ແລະ ການສັກຢາກັນພະຍາດ);
8) ຜົນການວິໄຈ ຂອງຫ້ອງວິໄຈພະຍາດ;
9) ການອະນາໄມ ຂ້າເຊື້ອ;
10) ການຄວບຄຸມສັດ ທີ່ເປັນພາຫະນຳເຊື້ອ;
11) ສຸຂະພາບຂອງ ບຸກຄະລາກອນ;
12) ການຢ້ຽມຢາມຂອງແຂກ;
13) ການຝຶກອົບຮົມ;
14) ການຄຸ້ມຄອງ ສິ່ງເສດເຫຼືອ;

15)ການສືບຄົ້ນຍ້ອນກັບ.

ຂໍ້ມູນຕ້ອງໄດ້ເກັບຮັກສາໄວ້ ຢ່າງໜ້ອຍ 3 ປີ ຫຼື ຕາມໄລຍະເວລາ ທີ່ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## 9. ການຄຸ້ມຄອງ ແລະ ຈັດການໄຂ່

### 9.1 ການເກັບໄຂ່

ກ່ອນການເກັບໄຂ່ທຸກຄັ້ງ ຜູ້ເກັບໄຂ່ ຕ້ອງອະນາໄມ ແລະ ຂ້າເຊື້ອມື ຂອງຕົນເສີຍກ່ອນ ແລະ ພາຍຫຼັງເກັບໄຂ່ແລ້ວ ກໍຕ້ອງລ້າງມືໃຫ້ສະອາດ.

### 9.2 ການຄັດ ແລະ ຈັດປະເພດໄຂ່

ຕ້ອງຄັດເລືອກ ເອົາໄຂ່ ທີ່ມີຮອຍແຕກແຫງ, ຮູບຮ່າງຜິດປົກກະຕິ ແລະ ໄຂ່ເປື້ອນ ອອກຈາກໄຂ່ປົກກະຕິ ບໍ່ໃຫ້ນຳໄປຈັດປະເພດ. ໄຂ່ທີ່ເກັບຈາກພື້ນ ກໍຕ້ອງໄດ້ ແຍກເກັບ ແລະ ຕິດກາໝາຍໄວ້ຕ່າງຫາກ.

### 9.3 ການເກັບຮັກສາໄຂ່

ໄຂ່ທີ່ໄດ້ຜ່ານການຄັດເລືອກແລ້ວ ຕ້ອງໄດ້ເກັບຮັກສາໄວ້ ໃນສະຖານທີ່ ທີ່ມີອາກາດເຢັນ ແລະ ມີການລະບາຍອາກາດທີ່ດີ.

### 9.4 ການຂົນສົ່ງ

ການຂົນສົ່ງໄຂ່ ຕ້ອງດຳເນີນໃນຊ່ວງໄລຍະເວລາ ທີ່ມີອາກາດເຢັນ ດ້ວຍພາຫານະຂົນສົ່ງ ທີ່ເໝາະສົມ ແລະ ນຳສົ່ງໃຫ້ເຖິງຈຸດໝາຍປາຍທາງ ໄວເທົ່າທີ່ຈະໄວໄດ້.

**ໝາຍເຫດ:** ວິທີການອະນາໄມ, ຂ້າເຊື້ອ ແລະ ການປະຕິບັດມາດຕະການຄວາມປອດໄພທາງດ້ານຊີວະພາບ ໃຫ້ອີງໃສ່ ຄູ່ມືການຈັດການຄວາມປອດໄພທາງຊີວະພາບ ສຳລັບຟາມລ້ຽງສັດປີກ ເປັນສິນຄ້າ ຂອງອາຊຽນ (ASEAN Biosecurity Management Manual for Commercial Poultry Farming and biosecurity protocols for poultry).

........................................................... ກລປ ...........................................................